*Journal of Science and Teacher Education (JLSTE), 1*(1), 186-195

# ການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນດ້ວຍຮູບແບບ CIPP MODEL ທີ່ເມືອງແບງ ແຂວງອຸດົມໄຊ

*ສີອຳໄພ ແສງມະນີ*, ສົມໃຈ ໄພຍະວົງ , ແສງດາວ ເພັດສົມບັດ ແລະ ພະນົມພອນ ຄອນສະຫວັດ*

*ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

## ບົດຄັດຫຍໍ້

ການຄົ້ນຄວ້າໃນຄັ້ງນີ້ເພື່ອ 1) ປະເມີນຜົນວຽກງານວິຊາການໃນດ້ານສະພາບແວດລ້ອມ, ດ້ານປັດໃຈນຳເຂົ້າເບື້ອງຕົ້ນ, ດ້ານຂະບວນການ ແລະ ດ້ານຜົນຜະລິດ ໂດຍໃຊ້ຮູບແບບ CIPP Model ຂອງໂຮງຮຽນມັດທະຍົມສຶກສາສົມບູນພາຍໃນເມືອງແບງ ແຂວງອຸດົມໄຊ. 2) ຜົນປຽບທຽບການປະເມີນວຽກງານວິຊາການໃນ 4 ດ້ານ ຂອງໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊ. ກຸ່ມເປົ້າໝາຍແມ່ນຄູສອນໂຮງຮຽນມັດທະຍົມສຶກສາສົມບູນ ທັງໝົດຈຳນວນ 68 ຄົນ, ຍິງ 26 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນໃຊ້ແບບສອບຖາມທີ່ໃຊ້ໃນການປະເມີນການປະຕິບັດວຽກງານດ້ານວິຊາການ. ສະຖິຕິໃນການວິເຄາະຂໍ້ມູນແມ່ນຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການທົດສອບ t-test. ຜົນການຄົ້ນຄວ້າພົບວ່າ ຜົນການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊ ໂດຍພາບລວມຢູ່ໃນລະດັບຫຼາຍ ( $\bar{x}$ = 4.43, S.D= 0.29). ເມື່ອພິຈາລະນາເປັນລາຍດ້ານພົບວ່າ ດ້ານທີ່ມີຜົນການປະເມີນໃນລະດັບຫຼາຍທີ່ສຸດແມ່ນດ້ານຂະບວນການພັດທະນາ ( $\bar{x}$= 4.57, S.D= 0.32). ຮອງລົງມາເປັນດ້ານຜົນຜະລິດ ( $\bar{x}$= 4.45, S.D= 0.35), ດ້ານບໍລິບົດ ຫຼື ສະພາບແວດລ້ອມ ( $\bar{x}$= 4.40, S.D= 0.36) ແລະ ດ້ານດ້ານປັດໃຈນາເຂົ້າ ( $\bar{x}$ = 4.29, S.D= 0.36) ຕາມລາດັບ. ຜົນການປຽບທຽບຜົນປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງແຂວງອຸດົມໄຊ ແມ່ນບໍ່ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນ 0.05. ສະແດງໃຫ້ເຫັນວ່າການນຳໃຊ້ CIPP Model ໃນການປະເມີນຜົນການດາເນີນງານດ້ານການບໍລິຫານວິຊາການໃນໂຮງຮຽນມີຄວາມສຳຄັນຫຼາຍເພາະວ່າຈະສາມາດຊ່ວຍໃຫ້ການບໍລິຫານຈັດການດ້ານວິຊາການມີລະບົບ, ຮອບດ້ານ, ໂປ່ງໃສ ແລະ ນຳໄປສູ່ການພັດທະນາໂຮງຮຽນແບບຍືນຍົງ ເຊິ່ງສົ່ງຜົນໂດຍກົງຕໍ່ຄຸນນະພາບການສຶກສາ ແລະ ອະນາຄົດຂອງນັກຮຽນ.

***ຄຳສັບສຳຄັນ:*** *ຮູບແບບການປະເມີນແບບ CIPP MODEL, ການປະເມີນວຽກວິຊາການ, ການບໍລິຫານໂຮງຮຽນ.*

* *ຕິດຕໍ່ພົວພັນ: ສີອຳໄພ ແສງມະນີ, ເບີໂທ: 02056090200, ອີເມວ: sengmanyseephai@gmail.com*

# Evaluation of Academic Performance in Secondary Schools Using the CIPP MODEL: A Case Study in Beng District, Oudomxay Province

*SiAmphai SENGMANY*, Somchay PHAIGNAVONG, Sengdao PHATHSOMBATH, Panomphone KHONESAVATH*

*Faculty of Education, Souphanouvong University, Lao PDR*

## Abstract

This study aims to: 1) Evaluate academic performance in terms of environmental context, input factors, process, and outcomes using the CIPP Model in comprehensive secondary schools in Beng District, Oudomxay Province. 2) Compare the assessment results across the four domains of academic performance in these schools. The target population consisted of 68 secondary school teachers, including 26 female teachers. The research employed a questionnaire as the primary data collection tool to assess the implementation of academic performance. The data analysis utilized statistical methods, including mean, standard deviation, and t-test analysis. The findings revealed that the overall academic performance assessment in the comprehensive secondary schools in Beng District was at a high level (M = 4.43, SD = 0.29). Among the four domains, the development process received the highest evaluation (M = 4.57, SD = 0.32), followed by outcomes (M = 4.45, SD = 0.35), environmental context (M = 4.40, SD = 0.36), and input factors (M = 4.29, SD = 0.36). The comparison of academic performance evaluations across the two schools showed no significant difference at the 0.05 significance level. These results highlight the importance of applying the CIPP Model in evaluating academic management, as it enables systematic, holistic, and transparent administration. Implementing this model can lead to sustainable school development, which directly impacts the quality of education and the future of students.

***Keywords:*** *CIPP Model, Academic Performance Evaluation, School Management*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາເປັນສິ່ງສຳຄັນຫຼາຍສຳລັບມະນຸດເພາະມະນຸດມີການຮຽນຮູ້ຕະຫຼອດຊີວິດ ແລະ ມີການພັດທະນາປ່ຽນແປງຢູ່ຕະຫຼອດເວລາ. ດັ່ງນັ້ນມະນຸດຈຶ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງມີການສຶກສາ ການພັດທະນາປະເທດໃຫ້ຈະເລີນນັ້ນຈຳເປັນຕ້ອງພັດທະນາຄຸນນະພາບຂອງຄົນ ແລະ ຖ້າຄົນເຮົາ ມີຄຸນນະພາບການສຶກສາສູງ ກໍຈະເຮັດໃຫ້ການພັດທະນາປະເທດຊາດນັ້ນໃຫ້ມີຄວາມຈະເລີນກ້າວໜ້າ, ຂະບວນການທີ່ສຳຄັນທີ່ສຸດໃນການ ພັດທະນາຄົນໃຫ້ມີຄຸນນະພາບ ມີຄວາມສາມາດທີ່ຈະປັບຕົວເຂົ້າສະພາບການປ່ຽນແປງຕ່າງໆ ນັ້ນກໍຄືຂະບວນ ການສຶກສາທີ່ດຳເນີນໄປໃນທາງທີ່ຖືກຕ້ອງເໝາະສົມກັບສະພາບທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງປະເທດສາມາດສ້າງຄວາມຈະເລີນກ້າວໜ້າໃຫ້ແກ່ປະເທດຊາດໄດ້ (ຄະນະຈັດຕັ້ງສູນກາງພັກ, 2016). ດ້ວຍເຫດນີ້, ລັດຖະບານເຮົາຖືເອົາການພັດທະນາຊັບພະຍາກອນມະນຸດເປັນປັດໄຈໃນການຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່ໂດຍຍຶດໝັ້ນການພັດທະນາແບບຍືນຍົງ ແລະ ການພັດທະນາມະນຸດເປັນປັດໄຈຕົ້ນຕໍເພື່ອຍົກລະດັບກຳລັງການຜະລິດ, ສ້າງເສດຖະກິດພູມປັນຍາ, ໃນນັ້ນໃຫ້ຖືເອົາຄົນລາວເປັນເປົ້າໝາຍ ແລະ ຈຸດສຸມການພັດທະນາ, ສືບຕໍ່ສຸມໃສ່ເສີມຂະຫຍາຍຜົນສຳເລັດຂອງການປະຕິຮູບການສຶກສາກໍ່ຄືການພັດທະນາ ຊັບພະຍາກອນມະນຸດຕາມ 3 ລັກສະນະ 5 ຫຼັກມູນຂອງການສຶກສາແຫ່ງຊາດໃຫ້ມີຄຸນນະພາບຕາມມາດຕະຖານຂອງພາກພື້ນ, ສາກົນ ແລະ ທັນສະໄໝ, ສືບຕໍ່ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ຕໍ່ພັນທະພົນລະເມືອງ, ມີສະຕິເຄົາລົບກົດໝາຍ, ມີລະດັບການສຶກສາ, ມີຄວາມຮັບຮູ້ດ້ານອາຊີບ ແລະ ມີສີມືໃນການອອກແຮງງານເພີ່ມຂຶ້ນ, ມີຄວາມຄິດປະດິດສ້າງ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝໂດຍມີຄວາມສີວິໄລທາງດ້ານຈິດໃຈເພື່ອພັດທະນາປະເທດຊາດໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ. (ພັກປະຊາຊົນປະຕິວັດລາວ, 2021) ເຊິ່ງສະແດງອອກຜ່ານ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກສາ, ສ້າງຊັບພະຍາກອນ ມະນຸດໃຫ້ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີດີມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ , ມີຄ່ານິຍົມ ຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດເພື່ອໃຫ້ກາຍເປັນກຳລັງແຮງທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ

ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ, ສອດຄ່ອງກັບລັດໄດ້ເອົາໃຈໃສ່ ປະຕິບັດນະໂຍບາຍການສຶກສາແຫ່ງຊາດ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງທີ່ດີ, ມີຄຸນສົມບັດ, ມີຄວາມຮູ້ຄວາມສາມາດ ແລະ ມີວິຊາຊີບ (ສະພາແຫ່ງຊາດ, 2015).

ໃນຂະນະດຽວກັນ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ກອງປະຊຸມລະດັບສູງ ຂອງໜ່ວຍງານວິຊາການຂະແໜງການ ສຶກສາ ໄດ້ຕົກລົງເຫັນດີຮັບຮອງເອົານະໂຍບາຍໃນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາວ່າ ຕ້ອງປັບປຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານເນື້ອໃນບົດສອນ, ທັກສະການສິດສອນ ຂອງຄູທຸກລະດັບນັບຕັ້ງແຕ່ຊັ້ນປະຖົມຂຶ້ນມາ, ເອົາໃຈໃສ່ຄຸ້ມຄອງ, ກວດກາ ແລະ ປະເມີນ ການບໍລິຫານງານຂອງຜູ້ບໍລິຫານ ໃນທຸກລະດັບ ແບບມີສ່ວນຮ່ວມ, ເນັ້ນປັບປຸງວຽກງານບໍລິຫານວິຊາການໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄຸນນະພາບໃຫ້ດີທີ່ສຸດ (ກະຊວງສຶກສາທິການ ແລະ ກິລາ, 2018ກ). ໃນມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກຖືເອົາການ ພັດທະນາຊັບພະຍາກອນມະນຸດເປັນປັດໄຈຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່, ຄຸ້ມຄອງ ແລະ ພັດທະນາສັງຄົມຢ່າງປະດິດສ້າງ, ເພື່ອສ້າງສັງຄົມຍຸດຕິທຳ ແລະ ສີວິໄລ ຖືເອົາການພັດທະນາຊັບພະຍາກອນ ມະນຸດເປັນປັດໄຈຕົ້ນຕໍ, ໃນນັ້ນຖືຄົນເປັນເປົ້າໝາຍ ແລະ ຈຸດສຸມຂອງການພັດທະນາຊັບພະຍາກອນມະນຸດ. ກ່ອນອື່ນໝົດຕ້ອງສຸມໃສ່ເສີມຂະຫຍາຍຜົນສຳເລັດຂອງການປະຕິຮູບການສຶກສາກໍຄືການພັດທະນາ ຊັບພະຍາກອນມະນຸດຕາມ 3 ລັກສະນະຊາດ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດໃຫ້ມີຄຸນນະພາບຕາມມາດຕະຖານຂອງພາກພື້ນສາກົນ ແລະ ທັນສະໄໝ, ໂດຍສະເພາະແມ່ນການພັດທະນາລະບົບເຕັກໂນໂລຊີ ຂ່າວສານ ແລະ ການສື່ສານ (ICT) ມີພາລະນາໄມສົມບູນ ແລະ ມີຄວາມສີວິໄລທາງດ້ານຈິດໃຈເພື່ອ ພັດທະນາປະເທດຊາດໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ. (ກະຊວງສຶກສາທິການ ແລະ ກິລາ, 2016)

ສະນັ້ນ, ການບໍລິຫານໂຮງຮຽນນັ້ນ, ຜູ້ບໍລິຫານຈະຕ້ອງຍຶດຖືວ່າວຽກງານວິຊາການເປັນວຽກງານຫຼັກຂອງໂຮງຮຽນເພາະວ່າການປະເມີນໂຮງຮຽນ ຫຼື ສະຖາບັນການສຶກສາຕ່າງໆຕົ້ນຕໍແມ່ນປະເມີນຜົນງານທາງວິຊາການ. ດັ່ງນັ້ນ, ວຽກງານວິຊາການຈຶ່ງປຽບເໝືອນໝາກຫົວໃຈຂອງໂຮງຮຽນ. ຍ້ອນເຫດຜົນດັ່ງກ່າວ, ຜູ້ບໍລິຫານໂຮງຮຽນຈະຕ້ອງເອົາໃຈໃສ່ເປັນຢ່າງຍິ່ງຕໍ່ວຽກງານວິຊາການ ແລະ ນຳໃຊ້ເວລາເຂົ້າໃນການບໍລິຫານວຽກງານວິຊາການຫຼາຍກວ່າການບໍລິຫານນວຽກງານອື່ນໆ ໂດຍກະຊວງສຶກສາທິການ ສປປ ລາວ ໄດ້ຈັດແບ່ງວຽກງານບໍລຫານໂຮງຮຽນອອກເປັນ 7 ໜ້າວຽກຄື: 1) ວຽກງານບໍລິຫານວິຊາການ, 2) ວຽກງານບໍລິຫານບຸກຄະລາກອນ, 3) ວຽກງານບໍລິຫານກິດຈະການນັກຮຽນ, 4) ວຽກງານບໍລິຫານທົ່ວໄປ ແລະ ການເງິນ, 5) ວຽກງານບໍລິຫານອາຄານສະຖານທີ່, 6) ວຽກງານບໍລິຫານອົງການຈັດຕັ້ງມະຫາຊົນ , 7) ວຽກງານບໍລິຫານຄວາມສຳພັນກັບຊຸມຊົນ (ກະຊວງສຶກສາທິການ ແລະ ກິລາ, 2018).

ໃນນີ້ວຽກບໍລິຫານວິຊາການ ເປັນໜຶ່ງໃນ 7 ໜ້າວຽກຕ້ອງສົ່ງເສີມການມີສ່ວນຮ່ວມຂອງທຸກຝ່າຍເຊິ່ງເປັນຈຸດມຸ່ງໝາຍຫຼັກຂອງໂຮງຮຽນ, ເປັນຕົວຊີ້ວັດຄວາມສຳເລັດ ແລະ ຄວາມສາມາດຂອງຜູ້ບໍລິຫານ ເພາະຈະໄດ້ໃຊ້ຄວາມຮູ້ຄວາມສາມາດຕະຫຼອດຮອດປະສົບການທັງໝົດມາດຳເນີນການບໍລິຫານວຽກງານໃນໂຮງຮຽນເພື່ອໃຫຜູ້ຮຽນປະສົບຄວາມສຳເລັດໃນການສຶກສາ, ເປັນຄົນດີ, ຄົນເກັ່ງ ແລະ ມີຄຸນນະພາບຕາມຄວາມຕ້ອງການຂອງສັງຄົມ, ຜູ້ບໍລິຫານການສຶກສາຈຶ່ງເປັນຜູ້ນຳທາງວິຊາການ ແລະ ມີຄວາມສາມາດໃນການເຮັດວຽກຮ່ວມກັນກັບຄູ, ໃຫ້ຄຳແນະນຳ ແລະ ປະສານງານໃຫ້ທຸກຄົນເຮັດວຽກຮ່ວມກັນຢ່າງມີປະສິດທິພາບ ແລະ ບັນລຸຕາມຈຸດປະສົງຂອງການສຶກສາ. (ກະຊວງສຶກສາທິການ ແລະ ກິລາ, 2018ຂ).

ເຖິງແມ່ນວ່າວຽກງານວິຊາການແມ່ນວຽກງານໜຶ່ງທີ່ວ່າສຳຄັນທີ່ສຸດໃນຂົງເຂດການສຶກສາ ເວົ້າລວມເວົ້າສະເພາະກໍຄືໂຮງຮຽນສາມັນທີ່ຈະຕ້ອງເອົາໃຈໃສ່ເປັນພິເສດໃນການສຶກສາອົບຮົມນັກຮຽນໃຫ້ພວກເຂົາມີຄວາມຮູ້ຄວາມສາມາດແຕ່ເນື່ອງຈາກວ່າຄູບາງຄົນໃນໂຮງຮຽນສາມັນຍັງບໍ່ທັນເອົາໃຈໃສ່ຕໍ່ວິຊາສະເພາະຂອງຕົນຢ່າງແທ້ຈິງ. ບາງຄົນຍັງຖືເບົາຕໍ່ການສິ່ງຄວາມຮູ້ໃຫ້ນັກຮຽນ. ສະນັ້ນ, ບັນຫາທີ່ເກີດຂຶ້ນນີ້ແມ່ນຈະຕ້ອງມີການແຂ້ໄຂເພື່ອເຮັດໃຫ້ການຮຽນ-ການສອນມີປະສິດທິພາບ ແລະ ປະສິດທິຜົນມັນຈຶ່ງແມ່ນໜ້າທີ່ສຳຄັນຂອງໜ່ວຍງານວິຊາການທີ່ຈະຕ້ອງໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດເພື່ອເຮັດໃຫ້ການຮຽນ-ການສອນຂອງຕົນໄດ້ຮັບ ປະສິດທິພາບຢ່າງເຕັມສ່ວນ. ດັ່ງນັ້ນ ວຽກງານວິຊາການຈຶ່ງເປັນວຽກງານທີ່ຜູ້ບໍລິຫານ ແລະ ຄູອາຈານຕ້ອງໃຫ້ຄວາມສຳຄັນຕ້ອງໃຊ້ ເວລາການບໍລິຫານຫຼາຍກວ່າວຽກງານອື່ນ. ວຽກງານວິຊາການເປັນວຽກງານທີ່ພິສູດຄວາມສຳເລັດຂອງຂົງເຂດການສຶກສາ, ໂຮງຮຽນທີ່ບໍ່ມີວິຊາການເຂັ້ມແຂງ ນັ້ນໂດຍປົກກະຕິບໍ່ວ່າຢູ່ບ່ອນໃດກໍ່ຈະບໍ່ໄດ້ຮັບຄຳຍົກຍ້ອງ ສ່ວນໂຮງຮຽນທີ່ມີວິຊາການເຂັ້ມແຂງນັ້ນນັກຮຽນມີຄຸນນະພາບໃນທຸກດ້ານເຊັ່ນ: ຮຽນສູງໄດ້ຕາມມາດຕະຖານທີ່ກຳນົດໄວ້ມີຄວາມຮູ້ ຄວາມສາມາດ ມີຜົນສຳເລັດທາງ ແລະ ຄຸນລັກສະນະສະເພາະທີ່ເພິ່ງພໍໃຈຕາມທີ່ຫຼັກສູດໄດ້ກຳນົດໄວ້ ຫາກໂຮງຮຽນໃດດຳເນີນການຮຽນ-ການສອນບັນລຸດັ່ງກ່າວມາ ສະແດງ

ວ່າ ປະຕິບັດພາລະກິດປະສົບຜົນສຳເລັດ (ກະຊວງສຶກສາທິການ ແລະ ກິລາ, 2015).

ພ້ອມດຽວກັນນັ້ນ ຈາກບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈຳປີ 2023 (ຫ້ອງການສຶກສາທິການ ແລະ ກິລາເມືອງແບງ ແຂວງອຸດົມໄຊ , 2023) ແລະ ແຜນວຽກຈຸດສຸມການພັດທະນາວຽກງານການສຶກສາ ແລະ ກິລາ ປະຈຳປີ 2024, ໄດ້ສະຫຼຸບດ້ານອ່ອນ ແລະ ຂໍ້ຄົງຄ້າງວ່າ: ສະພາບເສດຖະກິດມີການຖົດຖອຍເງິນກີບອ່ອນຄ່າເຮັດໃຫ້ແບບແຜນດຳລົງຊີວິດ ແລະ ການປະຕິບັດໜ້າທີ່ວຽກງານຂອງພະນັກງານຄູ-ອາຈານຈຳນວນໜຶ່ງຍັງມີແນວຄິດອີງເອື່ອຍ, ຂາດການຄົ້ນຄວ້າສິ່ງໃໝ່ໆ ເພື່ອພັດທະນາວຽກງານຂອງຕົນ ແລະ ຍັງບໍ່ເປັນແບບຢ່າງທີ່ດີໃນໝູ່ມະຫາຊົນ, ຜູ້ບໍລິຫານການສຶກສາຂັ້ນໂຮງຮຽນຈຳນວນໜຶ່ງຍັງບໍ່ທັນມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງຕົນເທົ່າທີ່ຄວນ ຂາດການຕິດຕາມກວດກາເປັນຕົ້ນແມ່ນວຽກງານວິຊາການເຊັ່ນ: ຂາດການກວດກາແຜນການສອນ, ກວດກາບົດສອນ ເຮັດໃຫ້ຄູສອນຈຳນວນໜຶ່ງຂາດຈັນຍາບັນຖືເບົາຕໍ່ໜ້າທີ່ວຽກງານ, ບໍ່ປະຕິບັດຕາມລະບຽບລັດຖະກອນຄູ, ບໍ່ແຕ່ງບົດສອນ, ແຕ່ງບົດສອນບໍ່ຕໍ່ເນື່ອງ, ສອນບໍ່ໝົດໂຄງການຫຼັກສູດ, ຂຶ້ນຫ້ອງສອນຊ້າ-ເລີກໄວ, ເຮັດໃຫ້ການສອນບໍ່ຮັບປະກັນຄຸນນະພາບດີເທົ່າທີ່ຄວນ. ນອກຈາກນັ້ນ ການມີສ່ວນຮ່ວມປະສານສົມທົບຂອງຄູ-ອາຈານ, ອົງການປົກຄອງ, ບຸກຄົນ ແລະ ນິຕິບຸກຄົນໃນສັງຄົມແມ່ນຍັງບໍ່ທັນມີຫຼາຍເຮັດໃຫ້ການມີສ່ວນມີລັກສະນະບໍ່ເຕັມເມັດເຕັມໜ່ວຍ (ຫ້ອງການສຶກສາທິການ ແລະ ກິລາເມືອງແບງ, 2023).

ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈຄົ້ນຄ້ວາສຶກສາການປະເມີນຜົນວຽກງານວິຊາການດ້ວຍຮູບແບບ CIPP MODEL ໃນໂຮງຮຽນມັດທະຍົມສຶກສາສົມບູນເມືອງແບງ ແຂວງອຸດົມໄຊ ເພື່ອຍົກໃຫ້ເຫັນເຖິງສະພາບການປະຕິບັດວຽກງານວິຊາການໃນດ້ານບໍລິບົດ, ປັດໃຈນຳເຂົ້າເບື້ອງຕົ້ນ, ຂະບວນການດາເນີນງານ ແລະ ດ້ານຜົນຜະລິດ ພ້ອມທັງເປັນຂໍ້ມູນຊ່ວຍໃຫ້ຜູ້ບໍລິຫານໄດ້ນຳມາປັບປຸງ ຫຼື ສົ່ງເສີມວຽກງານດັ່ງກ່າວໃຫ້ມີຜົນງານອັນພົ້ນເດັ່ນໃນອະນາຄົດ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

ຜົນການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊ ໃນດ້ານດ້ານປັດໃຈນຳເຂົ້າເບື້ອງຕົ້ນ, ດ້ານຂະບວນການ ແລະ ດ້ານຜົນຜະລິດ ເປັນແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

ເພື່ອປະເມີນຜົນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊ ໂດຍໃຊ້ຮູບແບບ CIPP Model ໂດຍປະເມີນ 4 ດ້ານໄດ້ແກ່: ດ້ານສະພາບແວດລ້ອມ, ດ້ານປັດໃຈນຳເຂົ້າເບື້ອງຕົ້ນ, ດ້ານຂະບວນການ ແລະ ດ້ານຜົນຜະລິດ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ແຍະລີ ຈູ່ມໍ່ (2012) ໄດ້ດຳເນີນການປະເມີນຜົນຫຼັກສູດປະລິນຍາຕີສຶກສາສາດພາກວິຊາຄູຄະນິດສາດມະຫາວິທະຍາໄລສຸພານຸວົງ ໂດຍການປະຍຸກໃຊ້ຮູບແບບການປະເມີນ CIPP Model ໃນ 4 ດ້ານ ຄື ດ້ານເອກະສານຫຼັກສູດ, ປັດໃຈເບື້ອງຕົ້ນ, ດ້ານຂະບວນການ ແລະ ດ້ານຜົນຜະລິດ. ກຸ່ມຕົວຢ່າງໄດ້ແກ່: ຜູ້ບໍລິຫານ 4 ຄົນ, ອາຈານສອນຈຳນວນ 10 ຄົນ, ນັກສຶກສາປີສຸດທ້າຍ 70 ຄົນ ແລະ ອະດີດນັກສຶກສາ ຈຳນວນ 59 ຄົນ ແລະ ຜູ້ໃຊ້ງານນັກສຶກສາທີ່ຈົບໄປ ຈຳນວນ 32 ຄົນ ລວມທັງໝົດ 175 ຄົນ. ເຄື່ອງມືທີ່ໃຊ້ໃນການວິໄຈ ແມ່ນແບບສອບຖາມ, ສະຖິຕິທີ່ໃຊ້ໃນການວິເຄາະແມ່ນຄ່າເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ສຳລັບຂໍ້ມູນດ້ານຄຸນນະພາບຈາກຄຳຖາມປາຍເປີດແມ່ນໃຊ້ການວິເຄາະແບບວິເຄາະເນື້ອໃນ. ຜົນການຄົ້ນຄວ້າພົບວ່າ: 1) ການປະເມີນດ້ານເອກະສານຫຼັກສູດ ໄດ້ແກ່ ປັດຊະຍາຂອງຫຼັກສູດ, ຈຸດປະສົງຂອງຫຼັກສູດ, ໂຄງສ້າງຫຼັກສູດ, ເນື້ອໃນລາຍວິຊາ ແລະ ແນວທາງໃນການຈັດການຮຽນການສອນ ແລະ ການວັດປະເມີນຜົນ ມີຄວາມເໝາະສົມໃນລະດັບຫຼາຍ; 2) ການປະເມີນປັດໃຈເບື້ອງຕົ້ນພົບວ່າ ຄຸນລັກສະນະຂອງອາຈານສອນ, ລັກສະນະຂອງຜູ້ຮຽນ, ໂຮງຮຽນທີ່ລົງຝຶກຫັດ ມີຄວາມເໝາະສົມລະດັບປານກາງ; 3) ການປະເມີນຂະບວນການຈັດການຮຽນການສອນ, ການຂຽນບົດໂຄງການຈົບຊັ້ນ, ການບໍລິຫານຈັດການຫຼັກສູດ, ການລົງຝຶກຫັດງານ, ການພັດທະນາອາຈານມີຄວາມເໝາະສົມຢູ່ໃນລະດັບຫຼາຍ, ສ່ວນການວັດ ແລະ ປະເມີນຜົນຢູ່ໃນລະດັບປານກາງ; 4) ການປະເມີນຜົນຜະລິດ ຫຼື ອະດີດນັກສຶກສາ ໄດ້ແກ່ຄຸນນະພາບຂອງອະດີດນັກສຶກສາທາງດ້ານວິຊາການ ແລະ ຄຸນລັກສະນະ ພົບວ່າມີຄວາມເໝາະສົມຢູ່ໃນລະດັບຫຼາຍ ແລະ 5) ຂໍ້ສະເໜີທີ່ສຳຄັນ ແລະ ຮີບດ່ວນຄື ວຸດທິການສຶກສາຂອງອາຈານສອນ, ສິ່ງອຳນວຍຄວາມສະດວກ, ການວັດແລະປະເມີນຜົນ, ໂຮງຮຽນບ່ອນລົງຝຶກຫັດງານ, ການຈັດການຮຽນການສອນ, ລະບົບການຂຽນບົດໂຄງການຈົບຊັ້ນ ແລະ ວິທີການລົງຝຶກຫັດງານຂອງນັກສຶກສາ.

Yamrung and Susaorat (2017) ໄດ້ດຳເນີນການປະເມີນໂຄງການເພີ່ມປະສິດທິພາບສະຖານສຶກສາທີ່ຕໍ່າກວ່າເກນ ໂດຍມີຈຸດປະສົງເພື່ອປະເມີນຜົນຂອງໂຄງການເພີ່ມປະສິດທິພາບຂອງສະຖາບັນການສຶກສາທີ່ຕໍ່າກວ່າມາດຕະຖານ ໂດຍນຳໃຊ້ຮູບແບບ CIPP model ອີງຕາມຄວາມຄິດເຫັນ ຂອງຄູສອນ, ຜູ້ບໍລິຫານ ໂຮງຮຽນ, ຄູສອນ, ຜູ້ຊົງຄຸນວຸດໃນ 4 ດ້ານ ໄດ້ແກ່: ດ້ານສະພາບແວດລ້ອມ; ດ້ານປັດໃຈເບື້ອງຕົ້ນ, ດ້ານຂະບວນການ ແລະ ຜົນຜະລິດ, ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າແບ່ງອອກເປັນ 4 ກຸ່ມ: 1) ກຸ່ມທີ່ໃຫ້ຂໍ້ມູນຕາມແບບສອບຖາມສະບັບທີ່ 1 ແມ່ນ

ຄູສອນ ແລະ ຜູ້ບໍລິຫານໂຮງຮຽນ ຈໍານວນ 500 ຄົນ, 2) ກຸ່ມທີ່ໃຫ້ຂໍ້ມູນຕາມແບບສອບຖາມສະບັບທີ 2 ແມ່ນຄູສອນ ແລະ ຜູ້ບໍລິຫານໂຮງຮຽນ 200 ຄົນ, 3) ກຸ່ມທີ່ໃຫ້ຂໍ້ມູນຈາກການສໍາພາດ: ມີຊີງຄຸນວຸດຈໍານວນ 5 ຄົນ ແລະ ຜູ້ບໍລິຫານໂຮງຮຽນ 40 ຄົນ, ວິທະຍາກອນ 10 ຄົນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈໍານວນ 4 ຄົນ. 4) ກຸ່ມທີ່ໃຫ້ຂໍ້ມູນຈາກ ການສົນທະນາກຸ່ມ ໄດ້ແກ່: ຄູສອນ ແລະ ຜູ້ບໍລິຫານໂຮງຮຽນ, ລວມ ທັງ 200 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າມີແບບສອບ ຖາມ, ແບບສໍາພາດ, ແບບບັນທຶກການສົນທະນາກຸ່ມ ແລະ ບັນທຶກເອກະສານ. ການວິເຄາະຂໍ້ມູນໃຊ້ຄ່າເປີເຊັນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການວິເຄາະເນື້ອໃນເອກະສານ. ຜົນຂອງການຄົ້ນຄວ້າ ພົບວ່າ: 1) ຜົນການປະເມີນດ້ານບໍລິບົດແມ່ນຢູ່ໃນລະດັບເໝາະສົມຫຼາຍ ( $\bar{x}$ = 4.19, S.D. = 0.78) 2) ໃນດ້ານປັດໄຈເບື້ອງຕົ້ນ, ຜົນການປະເມີນພົບວ່າເຫມາະສົມຫຼາຍ ( $\bar{x}$ = 4.11, S.D. = 0.84). 3) ໃນດ້ານຂະບວນການພົບວ່າຂັ້ນຕອນການຝຶກອົບຮົມ ຜົນການປະເມີນມີຄວາມເຫມາະສົມຫຼາຍຢູ່ໃນລະດັບຫຼາຍ ( $\bar{x}$= 4.03, S.D. = 0.85) ແລະ ຂະບວນການໃນການທັດສະນະສຶກສາ ຜົນການປະເມີນແມ່ນຢູ່ໃນລະດັບຫຼາຍທີ່ສຸດ ( $\bar{x}$= 4.36, S.D. = 0.47) 4) ໃນດ້ານຜົນຜະລິພົບວ່າຢູ່ໃນລະດັບຫຼາຍທີ່ສຸດ ( $\bar{x}$ = 4.31, S.D. = 0.71).

Paksripang (2018) ໄດ້ປະເມີນຫຼັກສູດໂປຼແຮມເນັ້ນຄວາມສາມາດທາງວິທະຍາສາດ ແລະ ຄະນິດສາດຂອງໂຮງຮຽນສາທິດພິບູນບໍາເພັນ ມະຫາວິທະຍາໄລບູລະພາ. ເຊິ່ງມີຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ແມ່ນເພື່ອປະເມີນຫຼັກສູດຂອງໂຮງຮຽນສາທິດພິບູນບໍາເພັນ ມະຫາວິທະຍາໄລບູລະພາ ຕາມຮູບແບບ CIPP Model ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າ ເປັນຜູ້ທີ່ມີສ່ວນກ່ຽວຂ້ອງກັບຈໍານວນທັງຫມົດ 61 ຄົນ, ໂດຍປະກອບດ້ວຍ: ຊ່ຽວຊານດ້ານຫລັກສູດ, ຜູ້ບໍລິຫານສະຖາບັນການສຶກສາ, ຄູສອນ, ນັກຮຽນ ແລະ ພໍ່ແມ່ຜູ້ປົກຄອງ. ຜົນຂອງການຄົ້ນຄວ້າສະແດງໃຫ້ເຫັນວ່າຫຼັກສູດດັ່ງກ່າວມີເຫມາະສົມໃນລະດັບຫຼາຍ ( $\bar{x}$ = 4.08, SD = 0.13). ໂດຍມີລາຍລະອຽດໃນແຕ່ລະ ດ້ານດັ່ງນີ້: 1) ດ້ານບໍລິບົດມີຄວາມເຫມາະສົມຢູ່ໃນລະດັບຫຼາຍ ( $\bar{x}$ = 4.24, SD = 0.11). 2) ປັດໄຈນໍາເຂົ້າມີເຫມາະສົມຢູ່ໃນລະດັບຫຼາຍ ( $\bar{x}$ = 3.96, SD = 0.53) 3) ດ້ານຂະບວນການ ຢູ່ໃນລະດັບຫຼາຍ ( $\bar{x}$ = 4.00, SD = 0.26) ແລະ 4) ຜົນຜະລິດມີຄວາມເໝາະສົມຢູ່ໃນລະດັບຫຼາຍ ( $\bar{x}$ = 4.13, SD = 0.29) ແລະຈາກຜົນການປະເມີນພົບວ່າບັນລຸ ມາດຕະ ຖານການປະເມີນທັງ 4 ດ້ານ.

Noinuay et al. (2023) ໄດ້ຄົ້ນຄວ້າກ່ຽວກັບການປະເມີນຫຼັກສູດສະຖານສຶກສາໂຮງຮຽນສອນກຸຫຼາບວິທະຍາໄລ ທົນບຸລີ ໂດຍໃຊ້ຮູບແບບການປະເມີນ CIPP Model. ທີ່ມີຈຸດປະສົງເພື່ອປະເມີນຫຼັກສູດສະຖານສຶກສາໂຮງຮຽນສອນກຸຫຼາບວິທະຍາໄລ ທົນບຸລີ ໂດຍໃຊ້ຮູບແບບການປະເມີນ CIPP Model ປະກອບດ້ວຍການປະເມີນຜົນດ້ານບໍລິບົດ, ປັດໃຈນໍາເຂົ້າເບື້ອງຕົ້ນ, ຂະບວນການດໍາເນີນງານ ແລະ ດ້ານຜົນຜະລິດ, ນໍາໃຊ້ກຸ່ມຕົວຢ່າງໃນການວິໄຈທັງໝົດ 810 ຄົນ ເຊິ່ງປະກອບດ້ວຍຜູ້ບໍລິຫານໂຮງຮຽນ 5 ຄົນ, ຄະນະກໍາມະການສະຖານສຶກສາ 15 ຄົນ, ຄູຜູ້ສອນ 108 ຄົນ, ນັກຮຽນ 341 ຄົນ ແລະ ຜູ້ປົກຄອງ 341 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ ໄດ້ແກ່ ແບບສອບຖາມ, ແບບສໍາພາດ. ວິເຄາະຂໍ້ມູນໂດຍໃຊ້ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການວິເຄາະເນື້ອໃນ. ຜົນການຄົ້ນຄວ້າພົບວ່າ: ຫຼັກສູດສະຖານສຶກສາໂຮງຮຽນສອນກຸຫຼາບວິທະຍາໄລ ທົນບຸລີ ມີຄວາມເໝາະສົມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນລາຍດ້ານພົບວ່າ ດ້ານປັດໃຈນໍາເຂົ້າເບື້ອງຕົ້ນມີຄວາມເໝາະສົມໃນລະດັບຫຼາຍທີ່ສຸດ, ດ້ານບໍລິບົດ, ດ້ານຂະບວນການດໍາເນີນງານ ແລະ ດ້ານຜົນຜະລິດ ມີຄວາມເໝາະສົມໃນລະດັບຫຼາຍ.

Wongthong et al. (2023) ໄດ້ຄົ້ນຄວ້າວິທີການປະເມີນໂຄງການສົ່ງເສີມໂຮງຮຽນເປັນຊຸມຊົນແຫ່ງການຮຽນຮູ້ໂດຍໃຊ້ CIPP Model ຂອງໂຮງຮຽນເກາະພະງັນສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຸລາດທານີ ແຂວງຊຸມພອນ. ຈຸດປະສົງຂອງການສຶກສາຄົ້ນຄວ້ານີ້ແມ່ນ 1) ເພື່ອປະເມີນໂຮງຮຽນໃນຖານະເປັນຊຸມຊົນການຮຽນຮູ້ ໂດຍໃຊ້ຮູບແບບ CIPP ແລະ 2) ເພື່ອສະເຫນີແນວທາງການພັດທະນາໂຄງການ. ການສົ່ງເສີມໂຮງຮຽນໃຫ້ເປັນຊຸມຊົນການຮຽນຮູ້. ຕົວຢ່າງໃຊ້ວິທີການເລືອກແບບເຈາະຈົງກັບຜູ້ບໍລິຫານ, ຄະນະກໍາມະການ ຂອງໂຮງຮຽນ, ນັກຮຽນ, ຄູສອນ ແລະ ພໍ່ແມ່ ຂອງນັກຮຽນມັດທະຍົມຊັ້ນປີທີ 1-6 ໃນສົກສຶກສາ 2022 ລວມທັງໝົດ 141 ຄົນ. ໃຊ້ເຄື່ອງມືຄົ້ນຄວ້າ 5 ປະເພດ: 1) ການປະເມີນສະພາບການ 2) ການປະເມີນປັດໄຈນໍາເຂົ້າ, 3) ການປະເມີນຂະບວນການ, 4) ການປະເມີນຜົນຜະລິດ, ແລະ 5) ການສໍາພາດ. ຜົນການຄົ້ນຄວ້າພົບວ່າ: 1) ໃນດ້ານສະພາບການ, ປັດໄຈ ນໍາເຂົ້າ ແລະ ຂະບວນການໂດຍພາບລວມ, ຄູ ສອນ ແລະ ຄະນະ ກໍາມະການໂຮງຮຽນແມ່ນຢູ່ໃນລະດັບຫຼາຍທີ່ສຸດ. ສ່ວນນັກຮຽນແລະຜູ້ປົກຄອງຢູ່ໃນລະດັບຫຼາຍ. 2) ແນວທາງການພັດທະນາໂຄງການສົ່ງເສີມໂຮງຮຽນເປັນຊຸມຊົນການຮຽນຮູ້ຂອງໂຮງຮຽນ, ຜົນການສໍາພາດຄູ ແລະຄະນະກໍາມະການການສຶກສາ ໄດ້ມີແນວ ຄິດທີ່ຈະສົ່ງເສີມໂຮງຮຽນໃຫ້ເປັນຊຸມຊົນທີ່ຮຽນຮູ້ ໂດຍການ ພັດທະນາຫລັກສູດທີ່ກອມລວມເຖິງການສ້າງຊຸມຊົນແຫ່ງການ ຮຽນຮູ້ສົ່ງເສີມການຮຽນຮູ້ທີ່ມີນັກຮຽນເປັນໃຈກາງ ແລະ ສົ່ງ ເສີມການເຮັດວຽກງານຮ່ວມກັບຄູ. ເຊິ່ງມີຄໍາແນະນໍາ ວ່າໂຄງການຄວນມີຕົວຊີ້ບອກທີ່ສອດຄ່ອງກັບຈຸດປະສົງ, ລາຍລະອຽດຂອງກິດຈະ

ກໍາ ແລະ ການດໍາເນີນງານ, ບັນທຶກການນິເທດ, ການຕິດຕາມ ແລະ ຜົນຜະລິດທີ່ກວມເອົາທຸກດ້ານ.

ຈາກການສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງສະແດງໃຫ້ເຫັນໄດ້ວ່າຮູບແບບປະເມີນ CIPP Model (Context, Input, Process, Product) ເປັນຮູບແບບທີ່ເໝາະສົມສໍາລັບການປະເມີນຂອງວຽກງານໃນຂົງເຂດທາງດ້ານວິຊາການ. ສະນັ້ນ, ຜູ້ຄົ້ນຄວ້າສາມາດສະຫຼຸບມາເປັນຂອບຄວາມຄິດທີ່ໃຊ້ໃນການສຶກສາຄົ້ນຄວ້າຄັ້ງນີ້ດັ່ງນີ້:




ຮູບທີ່ 1 ຂອບຄວາມຄິດໃນການສຶກສາ (ປັບປຸງຈາກ Stufflebeam, 2003)

- ການປະເມີນດ້ານບໍລິບົດ (Context Evaluation - C) ໝາຍເຖິງການປະເມີນທີ່ກ່ຽວຂ້ອງກັບສະພາບແວດລ້ອມອ້ອມຂ້າງທີ່ເປັນສິ່ງອໍານວຍຄວາມສະດວກ ແລະ ຊຸກຍູ້ແກ່ໂຮງຮຽນ
- ການປະເມີນປັດໃຈນໍາເຂົ້າ (Input Evaluation - I) ໝາຍເຖິງການປະເມີນບັນດາຊັບພະຍາກອນດ້ານຄູ ແລະ ບຸກຄະລາກອນທີ່ມີຄຸນະສົມບັດທີ່ກົງກັບການສອນ, ເນື້ອໃນ ແລະ ອຸປະກອນການສຶກສາທີ່ເໝາະສົມ
- ດ້ານຂະບວນການ (Process Evaluation - P) ໝາຍເຖິງການປະເມີນຂະບວນການທາງດ້ານວິທີການສອນ, ວິທີການປະເມີນຜົນ, ແລະ ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ.
- ດ້ານຜົນຜະລິດ (Product Evaluation - P) ໝາຍເຖິງການປະເມີນຜົນສ່ວນນັກຮຽນທີ່ຈົບ ຫຼື ສໍາເລັດການສຶກສາ

## 3. ວິທີດໍາເນີນການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ນໍາໃຊ້ລະບຽບການຄົ້ນຄວ້າແບບສໍາຫຼວດ (Survey research methodology) ດ້ວຍຂໍ້ມູນທາງດ້ານປະລິມານ (ປະກາຍລັດ ສຸວັນ ແລະ ອະມອນວິດ ວິເສດສະຫງວນ, 2012, ມາລຽມ ນິນລະພັນ, 2010) ໂດຍໃຊ້ແບບສອບຖາມເປັນເຄື່ອງມືຫຼັກໃນການຄົ້ນຄວ້າ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ການຄົ້ນຄວ້າຄັ້ງນີ້ເນື່ອງຈາກວ່າໃນໂຮງຮຽນມັດທະຍົມສົມບູນໃນເທດສະບານເມືອງແບງ ມີພຽງແຕ່ສອງແຫ່ງຜູ້ຄົ້ນຄົ້ນຄວ້າເລີຍກໍານົດເປັນການສຶກສາຈາກກຸ່ມເປົ້າໝາຍທີ່ເປັນຄູສອນໂຮງຮຽນມັດທະຍົມສຶກສາສົມບູນ ຈໍານວນທັງໝົດ 68 ຄົນ, ຍິງ 26 ຄົນ ເຊິ່ງມາຈາກໂຮງຮຽນມັດທະຍົມສົມບູນນາງົວ ແລະ ເມືອງແບງ ໂດຍໃຊ້ເທັກນິກການເລືອກຕົວຢ່າງແບບເຈາະຈົງ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນແບບສອບຖາມຊະນິດແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ລະດັບ (ບຸນຊົມ ສີສະອາດ, 2015; ປະກາຍລັດ ສຸວັນ ແລະ ອະມອນວິດ ວິເສດສະຫງວນ, 2012 ແລະ Vathanavong et al., 2024) ຄື: (5 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບຫຼາຍທີ່ສຸດ, 4 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບຫຼາຍ, 3 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບ ປານກາງ, 2 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບໜ້ອຍ, 1 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບໜ້ອຍທີ່ສຸດ). ເຊິ່ງແບບສອບຖາມປະກອບມີ 2 ພາກ ຄື: ພາກທີ 1. ສອບຖາມກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ, ພາກທີ 2. ສອບຖາມກ່ຽວກັບການປະເມີນວຽກວິຊາການຄູໃນຮູບແບບຂອງ CIPP Model ເຊິ່ງມີປະກອບມີ 4 ດ້ານ ຄື 1. ດ້ານບໍລິບົດ (context evaluation), 2. ດ້ານປັດໃຈນໍາເຂົ້າເບື້ອງຕົ້ນ (input evaluation), 3. ດ້ານຂະບວນການ (process) ແລະ 4. ດ້ານຜົນຜະລິດ (product).

ເຊິ່ງແບບສອບຖາມສະບັບດັ່ງກ່າວໄດ້ດໍາເນີນການສ້າງ ແລະ ຫາຄຸນນະພາບ ດັ່ງນີ້:

1) ສຶກສາຄົ້ນຄວ້າທິດສະດີ, ຫຼັກການ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບສິ່ງທ້າທາຍຕໍ່ກັບປະສິດທິພາບຄູ

ໃນສະຖານການສຶກສາຄູໃນ ສປປ ລາວ ເພື່ອເປັນພື້ນຖານໃນການສ້າງເຄື່ອງມືໃນການເກັບກຳຂໍ້ມູນ.

2) ສ້າງແບບສອບຖາມໃຫ້ຄອບຄຸມຕາມຈຸດປະສົງທີ່ຕັ້ງໄວ້ເພື່ອເປັນເຄື່ອງມືໃນການເກັບຂໍ້ມູນ.

3) ນຳແບບສອບຖາມໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານເພື່ອພິຈາລະນາຄວາມຊັດເຈນຂອງຄຳຖາມ, ສິ່ງທີ່ຄວນປັບປຸງ ແລະ ກວດສອບຄວາມທ່ຽງຕົງທາງດ້ານເນື້ອໃນ ໂດຍມີດັດສະນີຄວາມສອດຄ່ອງ (IOC : Index of item objective congruence) ລະຫວ່າງ 0.67 – 1.00 ແລະ ມີຄ່າສະເລ່ຍຄວາມເໝາະສົມ 4.55 ຢູ່ໃນລະດັບເໝາະສົມຫຼາຍທີ່ສຸດ

4) ນຳແບບສອບຖາມທີ່ປັບປຸງແລ້ວໄປທົດລອງໃຊ້ (Try out) ຄູສອນຈຳນວນ 30 ຄົນ ທີ່ບໍ່ແມ່ນກຸ່ມຕົວຢ່າງໃນໂຮງຮຽນມັດທະຍົມສົມບູນບ້ານຂ້ອນ ເມືອງແບງ ແຂວງອຸດົມໄຊ; ໂດຍວິເຄາະຫາຄ່າຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມໂດຍໃຊ້ຄ່າສຳປະສິດອານຟາ (Alpha –Coefficient) ຕາມວິທີການຂອງ Cronbach ໄດ້ຄ່າ 0.872.

5) ປັບປຸງແກ້ໄຂແບບສອບຖາມໃຫ້ຖືກຕ້ອງເໝາະສົມ ແລະ ຈັດພິມສະບັບສົມບູນແລ້ວນຳໄປເກັບຂໍ້ມູນນຳກຸ່ມເປົ້າໝາຍໃນໂຮງຮຽນມັດທະຍົມສົມບູນ ເມືອງແບງ ແລະ ໂຮງຮຽນມັດທະຍົມສົມບູນນາງົວ ເຊິ່ງລວມທັງໝົດແມ່ນ 68 ຄົນ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ການວິເຄາະຂໍ້ມູນຄັ້ງນີ້ແມ່ນນຳໃຊ້ໂປຣແກມຄອມພິວເຕີສຳເລັດຮູບ SPSS version 20 ເຂົ້າຊ່ວຍໃນການວິເຄາະກ່ຽວກັບຂໍ້ມູນແຕ່ລະພາກ ໂດຍໃຊ້ຄ່າສະຖິຕິພື້ນຖານ, ໄດ້ແກ່: ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation). ສາລັບຄ່າສະເລ່ຍແມ່ນນາໄປປຽບທຽບກັບເກນເພື່ອອະທິບາຍຜົນ (ປະກາຍລັດ ສຸວັນ ແລະ ອະມອນວິດ ວິເສດສະຫງວນ, 2012, ມາລຽມ ນິນລະພັນ, 2010) ເຊິ່ງການົດເກນດັ່ງນີ້:

- ຄະແນນສະເລ່ຍລະຫວ່າງ 4.50 – 5.00 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບຫຼາຍທີ່ສຸດ
- ຄະແນນສະເລ່ຍລະຫວ່າງ 3.50 – 4.49 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບ ຫຼາຍ
- ຄະແນນສະເລ່ຍລະຫວ່າງ 2.50 – 3.49 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບປານກາງ
- ຄະແນນສະເລ່ຍລະຫວ່າງ 1.50 – 2.49 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບ ໜ້ອຍ
- ຄະແນນສະເລ່ຍລະຫວ່າງ 1.00 – 1.49 ໝາຍເຖິງການປະຕິບັດງານວິຊາການໄດ້ໃນລະດັບໜ້ອຍທີ່ສຸດ.

## 4. ຜົນການຄົ້ນຄວ້າ

1) ຜົນການການປະເມີນວຽກງານວິຊາການໃນ 4 ດ້ານ ຂອງໂຮງຮຽນມັດທະຍົມສຶກສາສົມບູນ ທີ່ເມືອງແບງ ແຂວງອຸດົມໄຊ

ຕາຕະລາງທີ 1 ຜົນການການປະເມີນວຽກງານວິຊາການໃນ 4 ດ້ານ ຂອງໂຮງຮຽນມັດທະຍົມສຶກສາສົມບູນ ທີ່ເມືອງແບງ ແຂວງອຸດົມໄຊ

| ລາຍການປະເມີນ | $\bar{x}$ | S.D | ລະດັບຜົນການປະເມີນ |
|---|---|---|---|
| 1. ດ້ານບໍລິບົດ ຫຼື ສະພາບແວດລ້ອມ | 4.40 | 0.36 | ຫຼາຍ |
| 2. ດ້ານປັດໃຈນາເຂົ້າ | 4.29 | 0.39 | ຫຼາຍ |
| 3. ດ້ານຂະບວນການພັດທະນາ | 4.57 | 0.32 | ຫຼາຍທີ່ສຸດ |
| 4. ດ້ານຜົນຜະລິດ | 4.45 | 0.35 | ຫຼາຍ |
| ສະເລ່ຍລວມ | 4.43 | 0.29 | ຫຼາຍ |

ຈາກຕາຕະລາງທີ 1 ພົບວ່າຜົນການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊໂດຍພາບລວມຢູ່ໃນລະດັບຫຼາຍ ($\bar{x}$= 4.43, S.D= 0.29). ໂດຍທຸກດ້ານມີຜົນການປະເມີນຢູ່ໃນລະດັບຫຼາຍຫາ ລະດັບຫຼາຍທີ່ສຸດ. ເມື່ອພິຈາລະນາເປັນລາຍດ້ານ ພົບວ່າດ້ານທີ່ມີຜົນການປະເມີນໃນລະດັບຫຼາຍທີ່ສຸດແມ່ນດ້ານຂະບວນການພັດທະນາ ($\bar{x}$= 4.57, S.D= 0.32). ຮອງລົງມາເປັນດ້ານຜົນຜະລິດ ($\bar{x}$= 4.45, S.D= 0.35), ດ້ານບໍລິບົດ ຫຼື ສະພາບແວດລ້ອມ ($\bar{x}$= 4.40, S.D= 0.36) ແລະ ດ້ານດ້ານປັດໃຈນຳເຂົ້າ ($\bar{x}$= 4.29, S.D= 0.36) ຕາມລຳດັບ

ຕາຕະລາງທີ 2 ຜົນປຽບທຽບການປະເມີນວຽກງານວິຊາການໃນ 4 ດ້ານ ຂອງໂຮງຮຽນມັດທະຍົມສຶກສາສົມບຸນທີ່ເມືອງແບງ ແຂວງອຸດົມໄຊ

| **ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນ** | **ໂຮງຮຽນແຫ່ງທີ່ 1 (28 ຄົນ)** | | **ໂຮງຮຽນແຫ່ງທີ່ 2 (40 ຄົນ)** | | **T-test** | **Sig.(2 tailed)** |
|---|---|---|---|---|---|---|
| | $\bar{x}$ | **S.D** | $\bar{x}$ | **S.D** | | |
| 1. ດ້ານບໍລິບົດ ຫຼື ສະພາບແວດລ້ອມ | 4.41 | 0.39 | 4.40 | 0.34 | 0.134 | 0.893 |
| 2. ດ້ານປັດໃຈນາເຂົ້າ | 4.28 | 0.39 | 4.30 | 0.39 | - 0.234 | 0.816 |
| 3. ດ້ານຂະບວນການພັດທະນາ | 4.62 | 0.31 | 4.54 | 0.32 | 1.00 | 0.317 |
| 4. ດ້ານຜົນຜະລິດ | 4.44 | 0.37 | 4.46 | 0.35 | -0.27 | 0.788 |

ຈາກຕາຕະລາງທີ 2 ພົບວ່າ ຜົນການປຽບທຽບການປະເມີນວຽກງານວິຊາການໃນ 4 ດ້ານ ຂອງໂຮງຮຽນມັດທະຍົມສຶກສາສົມບຸນທີ່ເມືອງແບງ ແຂວງອຸດົມໄຊ ທັງສອງແຫ່ງທັງໂດຍພາບລວມ ແລະ ລາຍດ້ານທັງ ແມ່ນບໍ່ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສໍາຄັນ 0.05 ໂດຍໃນດ້ານຂະບວນການພັດທະນາໂຮງຮຽນແຫ່ງທີ່ 1 ຫຼາຍກວ່າແຫ່ງທີ່ສອງພຽງເລັກນ້ອຍ

## 5. ອະພິປາຍຜົນ

ການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບຸນດ້ວຍຮູບແບບ CIPP MODEL ທີ່ເມືອງແບງແຂວງອຸດົມໄຊ ໂດຍໄດ້ດໍາເນີນການປະເມີນທັງ 4 ດ້ານ ໄດ້ແກ່ດ້ານບໍລິບົດ ຫຼື ສະພາບແວດລ້ອມ, ດ້ານປັດໃຈນໍາເຂົ້າເບື້ອງຕົ້ນ, ດ້ານຂະບວນການ ແລ ດ້ານການຜະລິດ ຈາກຄວາມຄິດເຫັນຂອງຄູທັງສອງໂຮງຮຽນ ພົບວ່າມີຜົນການປະເມີນປະຕິບັດງານວິຊາການຢູ່ໃນລະດັບຫຼາຍຂຶ້ນໄປທຸກດ້ານ ແລະ ມີປະເດັນທີ່ສາມາດນໍາມາອະພິປາຍ ດັ່ງນີ້:

ຜົນການປະເມີນວຽກງານທັງ 4 ດ້ານ ໂດຍພາບລວມຢູ່ໃນລະດັບຫຼາຍເຖິງຫຼາຍທີ່ສຸດ ແລະ ເມື່ອປຽບທຽບຜົນການປະເມີນຜົນການປະຕິບັດງານຂອງໂຮງຮຽນທັງສອງແຫ່ງແມ່ນບໍ່ແຕກຕ່າງກັນ ອາດຈະເປັນຍ້ອນວ່າ:

1) ທາງດ້ານບໍລິບົດ ຫຼື ສະພາບແວດລ້ອມແມ່ນທາງໂຮງຮຽນມັດທະຍົມສົມບູນໄດ້ມີເປົ້າໝາຍໃນການດໍາເນີນການດ້ານບໍລິຫານທີ່ຊັດເຈນຕາມວິໄສທັດຂອງຫ້ອງການສຶກວສາທິການ ແລະ ກິລາເມືອງແບງ ວາງອອກ ນໍາມາສູ່ການປະຕິບັດດ້ວຍການກໍານົດເປັນແຜນພັດທະນາໂຮງຮຽນ, ແຜນນະໂຍບາຍ, ແຜນປະຕິບັດງານ ທີ່ເປັນແນວທາງມນການດໍາເນີນງານໃຫ້ກັບບຸກຄະລາກອນ ແລະ ຜູ້ທີ່ກ່ຽວຂ້ອງກັບການສຶກສາໃນໜ່ວຍງານໄດ້ນໍາໄປດໍາເນີນງານດ້ານອື່ນ ໆ ທີ່ມີຈຸດໝາຍໃນການປະຕິບັດເປັນໄປໃນທິດທາງດຽວກັນ. ອີກດ້ານໜຶ່ງດ ສະຖານທີ່ຕັ້ງຂອງໂຮງຮຽນມີຄວາມເໝາະສົມ, ສະພາບແວດລ້ອມພາຍໃນໂຮງຮຽນເປັນລະບຽບ ແລະ ສວຍງາມ ອັນສົ່ງຜົນຕໍ່ບັນຍາກາດພາຍໃນໂຮງຮຽນມີຜົນຕໍ່ການການສິດສອນຂອງຄູ, ຄູມີຄວາມມີສາມາດ ແລະ ປະສົບການໃນການສອນ ແລະ ໂຮງຮຽນມີອຸປະກອນການຮຽນ-ການສອນພຽງພໍ.

2) ດ້ານປັດໃຈນາເຂົ້າແມ່ນໂຮງຮຽນມີຄວາມພ້ອມໃນດ້ານງົບປະມານຈໍານວນໜຶ່ງທີ່ສາມາດບໍລິຫານຈັດການວຽກງານຫຼາຍດ້ານລວມເຖິງການຈັດການການຮຽນຮູ້ຂອງຄູ. ເຮັດໃຫ້ໂຮງຮຽນມີຄູສອນຈໍານວນພຽງພໍສໍາລັບຫ້ອງຮຽນເພື່ອສອນຕາມວິຊາ, ຕາມຄວາມສາມາດ ແລະ ຄວາມຊໍານານຂອງເຂົາເຈົ້າ, ເຮັດໃຫ້ຄູມີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບົດບາດ ແລະ ຫນ້າທີ່ຂອງຕົນ, ພ້ອມທັງໄດ້ຮັບການສົ່ງເສີມ ແລະ ການສະຫນັບສະຫນູນຢ່າງເປັນລະບົບ ແລະ ຕໍ່ເນື່ອງຈາກຜູ້ບໍລິຫານໂຮງຮຽນ.

3) ດ້ານຂະບວນການພັດທະນາໂຮງຮຽນ ແມ່ນທາງໂຮງຮຽນໄດ້ມີການຈັດການຮຽນ-ການສອນມີຄວາມເໝາະສົມກັບໄວອາຍຸຂອງຜູ້ຮຽນ, ມີກິດຈະກໍາການສອນຂອງຄູໃນໂຮງຮຽນມີປະໂຫຍດຕໍ່ຜູ້ຮຽນ, ຄູສອນໄດ້ໃຊ້ສື່ທີ່ຫລາກຫລາຍເຂົ້າໃນການຮຽນການສອນ, ຄູມີເຕັກນິກ ແລະ ວິທີການສອນຊ່ວຍໃຫ້ນັກຮຽນມີຄວາມຮູ້ຄວາມເຂົ້າໃຈ, ໂຮງຮຽນມີການນິເທດຊຸກຍູ້ຕິດຕາມການຮຽນການສອນ, ໂຮງຮຽນໄດ້ຕິດຕາມການດໍາເນີນວຽກງານວິຊາການຢ່າງສະໝໍ່າສະເໝີ ແລະ ມີມາດຖານການປະເມີນຄູ-ອາຈານມີຄວາມໂປ່ງໃສ, ສອດຄ່ອງ ແລະ ເໝາະສົມ.

4) ດ້ານຜົນຜະລິດ ແມ່ນໂຮງຮຽນໄດ້ມີລະບົບການຕິດຕາມນັກຮຽນທີ່ຈົບໄປສາມາດນໍາເອົາຄວາມຮູ້ທີ່ໄດ້ຮຽນມາຈາກຄູມານໍາໃຊ້ໄດ້ໃນຊີວິດປະຈໍາວັນໄດ້ຈໍານວນໜຶ່ງ. ຄູສອນສາມາດນໍາຫຼັກສູດໄປໃຊ້ໄດ້ຢ່າງມີປະສິດທິພາບໃນຫ້ອງຮຽນ. ດັ່ງທີ່ເຫັນໄດ້ຈາກການຈັດຕັ້ງກິດຈະກໍາການຮຽນຮູ້ໃນລາຍວິຊາຕ່າງ ໆ ຄູເນັ້ນໜັກໃຫ້ຜູ້ຮຽນໄດ້ຝຶກຝົນ ແລະ ໄດ້ໃຫ້ໂອກາດແກ່ຜູ້ຮຽນທີ່ຈະມີສ່ວນຮ່ວມໃນກິດຈະກໍາທີ່ຫຼາກຫຼາຍ ຊຶ່ງເຮັດໃຫ້ຜູ້ຮຽນຮູ້ຕື່ນຕົວໃນການຮຽນຮູ້ ແລະ ມ່ວນຊື່ນໃນການຮໍ່າຮຽນ ເຊິ່ງຜົນການຄົ້ນຄວ້າທີ່ກ່າວມາສອດຄ່ອງກັບຜົນການຄົ້ນຄວ້າຂອງແຍະລີ່ ຈູ່ມໍ່ (2012) ທີ່ໄດ້ປະເມີນຜົນຫຼັກສູດປະລິນຍາຕີສຶກສາສາດພາກວິຊາຄູຄະນິດສາດ ມະຫາວິທະຍາໄລສຸພານຸວົງ ໂດຍການປະຍຸກໃຊ້ຮູບແບບການປະເມີນ CIPP Model ໃນ 4 ດ້ານ

ແລະ ມີຜົນການຄົ້ນຄວ້າພົບວ່າ: 1) ການປະເມີນດ້ານເອກະສານຫຼັກສູດ ໄດ້ແກ່ ປັດຊະຍາຂອງຫຼັກສູດ, ຈຸດປະສົງຂອງຫຼັກສູດ, ໂຄງສ້າງຫຼັກສູດ, ເນື້ອໃນລາຍວິຊາ ແລະ ແນວທາງໃນການຈັດການຮຽນການສອນ ແລະ ການວັດປະເມີນຜົນ ມີຄວາມເໝາະສົມໃນລະດັບຫຼາຍ; 2) ການປະເມີນປັດໃຈເບື້ອງຕົ້ນພົບວ່າ ຄຸນລັກສະນະຂອງອາຈານສອນ, ລັກສະນະຂອງຜູ້ຮຽນ, ໂຮງຮຽນທີ່ລົງຝຶກຫັດ ມີຄວາມເໝາະສົມລະດັບປານກາງ; 3) ການປະເມີນຂະບວນການຈັດການຮຽນການສອນ, ການຂຽນບົດໂຄງການຈົບຊັ້ນ, ການບໍລິຫານຈັດການຫຼັກສູດ, ການລົງຝຶກຫັດງານ, ການພັດທະນາອາຈານມີຄວາມເໝາະສົມຢູ່ໃນລະດັບຫຼາຍ, ສ່ວນການວັດ ແລະ ປະເມີນຜົນຢູ່ໃນລະດັບປານກາງ; 4) ການປະເມີນຜົນຜະລິດ ຫຼື ອະດີດນັກສຶກສາ ໄດ້ແກ່ຄຸນນະພາບຂອງອະດີດນັກສຶກສາທາງດ້ານວິຊາການ ແລະ ຄຸນລັກສະນະ  ພົບວ່າ ມີຄວາມເໝາະສົມຢູ່ໃນລະດັບຫຼາຍ. ສອດຄ່ອງກັບຜົນການຄົ້ນຄວ້າຂອງ Noinuay et al. (2023) ທີ່ໄດ້ດຳເນີນການປະເມີນຫຼັກສູດສະຖານສຶກສາໂຮງຮຽນສອນກຸຫຼາບວິທະຍາໄລ ທົນບຸລີ ໂດຍໃຊ້ຮູບແບບການປະເມີນ CIPP Model ໂດຍມີຜົນການຄົ້ນຄວ້າພົບວ່າ: ຫຼັກສູດສະຖານສຶກສາໂຮງຮຽນສອນກຸຫຼາບວິທະຍາໄລ ທົນບຸລີ ມີຄວາມເໝາະສົມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນລາຍດ້ານພົບວ່າ ດ້ານປັດໃຈນຳເຂົ້າເບື້ອງຕົ້ນມີຄວາມເໝາະສົມໃນລະດັບຫຼາຍທີ່ສຸດ, ດ້ານບໍລິບົດ, ດ້ານຂະບວນການດຳເນີນງານ ແລະ ດ້ານຜົນຜະລິດ ມີຄວາມເໝາະສົມໃນລະດັບຫຼາຍ. ນອກຈາກນີ້, ຍັງສອດຄ່ອງກັບ Wongthong et al. (2023) ໄດ້ຄົ້ນຄວ້າວິທີການປະເມີນໂຄງການສົ່ງເສີມໂຮງຮຽນເປັນຊຸມຊົນແຫ່ງການຮຽນຮູ້ໂດຍໃຊ້ CIPP Model ຂອງໂຮງຮຽນເກາະພະງັນສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຸລາດທານີ ແຂວງຊຸມພອນ. ທີ່ໄດ້ຮັບຜົນການຄົ້ນຄວ້າພົບວ່າ: 1) ໃນດ້ານສະພາບການ, ປັດໃຈ ນຳເຂົ້າ ແລະ ຂະບວນການໂດຍພາບລວມ, ຄູ ສອນ ແລະ ຄະນະ ກຳມະການໂຮງຮຽນແມ່ນຢູ່ໃນລະດັບຫຼາຍທີ່ສຸດ. ສ່ວນນັກຮຽນແລະຜູ້ປົກຄອງຢູ່ໃນລະດັບຫຼາຍ. 2) ແນວທາງການພັດທະນາໂຄງການສົ່ງເສີມໂຮງຮຽນເປັນຊຸມຊົນການຮຽນຮູ້ຂອງໂຮງຮຽນ, ຜົນການສຳພາດຄູ ແລະຄະນະກຳມະການການສຶກສາ ໄດ້ມີແນວ ຄິດທີ່ຈະສົ່ງເສີມໂຮງຮຽນໃຫ້ເປັນຊຸມຊົນທີ່ຮຽນຮູ້ ໂດຍການ ພັດທະນາຫລັກສູດທີ່ກວມລວມເຖິງການສ້າງຊຸມຊົນແຫ່ງການ ຮຽນຮູ້ສົ່ງເສີມການຮຽນຮູ້ທີ່ມີນັກຮຽນເປັນໃຈກາງ ແລະ ສົ່ງ ເສີມການເຮັດວຽກງານຮ່ວມກັບຄູ. ເຊິ່ງມີຄຳແນະນຳ ວ່າໂຄງການຄວນມີຕົວຊີ້ບອກທີ່ສອດຄ່ອງກັບຈຸດປະສົງ, ລາຍລະອຽດຂອງກິດຈະກຳ ແລະ ການດຳເນີນງານ, ບັນທຶກການນິເທດ, ການຕິດຕາມ ແລະ ຜົນຜະລິດທີ່ກວມເອົາທຸກດ້ານ.

## 6. ສະຫຼຸບຜົນ

ຜົນການຄົ້ນຄວ້າຄັ້ງນີ້ສາມາດສະຫຼຸບໄດ້ດັ່ງນີ້:

1). ຜົນການປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງ ແຂວງອຸດົມໄຊ ໂດຍພາບລວມຢູ່ໃນລະດັບຫຼາຍ ( $\bar{x}$ = 4.43, S.D= 0.29). ເມື່ອພິຈາລະນາເປັນລາຍດ້ານ ພົບວ່າດ້ານທີ່ມີຜົນການປະເມີນໃນລະດັບຫຼາຍທີ່ສຸດແມ່ນດ້ານຂະບວນການພັດທະນາ ( $\bar{x}$= 4.57, S.D= 0.32). ຮອງລົງມາເປັນດ້ານຜົນຜະລິດ ( $\bar{x}$= 4.45, S.D= 0.35), ດ້ານບໍລິບົດ ຫຼື ສະພາບແວດລ້ອມ ( $\bar{x}$= 4.40, S.D= 0.36 ແລະ ດ້ານດ້ານປັດໃຈນຳເຂົ້າ ( $\bar{x}$ = 4.29, S.D= 0.36) ຕາມລາດັບ.

2) ຜົນການປຽບທຽບຜົນປະເມີນວຽກງານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນທີ່ເມືອງແບງແຂວງອຸດົມໄຊ ແມ່ນບໍ່ມີຄວາມແຕກຕ່າງກັນ ດ້ວຍລະດັບຄວາມສຳຄັນ 0.05

ຈາກຜົນການຄົ້ນຄວ້າບົດນີ້ສາມາດຢັ້ງຢືນໄດ້ວ່າ ການນຳໃຊ້ CIPP Model ໃນການປະເມີນຜົນການດຳເນີນງານດ້ານການບໍລິຫານວິຊາການໃນໂຮງຮຽນມີຄວາມສຳຄັນຫຼາຍເພາະວ່າຈະສາມາດຊ່ວຍໃຫ້ການບໍລິຫານຈັດການດ້ານວິຊາການມີລະບົບ, ຮອບດ້ານ, ໂປ່ງໃສ ແລະ ນຳໄປສູ່ການພັດທະນາໂຮງຮຽນແບບຍືນຍົງ ເຊິ່ງສົ່ງຜົນໂດຍກົງຕໍ່ຄຸນນະພາບການສຶກສາ ແລະ ອະນາຄົດຂອງນັກຮຽນ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການຄົ້ນຄວ້າຄັ້ງນີ້ເປັນຂໍ້ມູນທາງດ້ານປະລິມານ ທີ່ເກັບກຳຈາກກຸ່ມຕົວຢ່າງທີ່ເປັນຄູສອນເທົ່ານັ້ນ, ອີກປະການໜຶ່ງການອະທິປາຍຜົນຍັງບໍ່ໄດ້ປຽບທຽບກັບທິດສະດີ ແລະ ຜົນການຄົ້ນຄວ້າທີ່ຫຼາກຫຼາຍ.

## 8. ຂໍ້ສະເໜີແນະ

ອີງຕາມຜົນການຄົ້ນຄວ້າຄັ້ງນີ້ ມີຂໍແນະນຳບາງດ້ານ ດັ່ງຕໍ່ນີ້:

1. ສະເໜີມາຍັງຜູ້ບໍລິຫານຄວນເນັ້ນໃສ່ການປະເມີນທຸກຂອບເຂດຂອງວຽກງານ, ຈາກການວິເຄາະຕາມສະພາບການຈິນເຖິງການພິຈາລະນາຜົນຮັບນຳໄປໃຊ້ເປັນແນວທາງສຳລັບການຕັດສິນໃຈໃນການພັດທະນາ ຫຼື ປັບປຸງຕາມຫຼັກການ.

2. ຄວນສົ່ງເສີມການຮຽນຮູ້ຂອງຜູ້ຮຽນ ດ້ວຍການສະໜັບສະໜູນວິທີການຈັດກິດຈະກຳຂອງຄູໃຫ້ຫຼາກຫຼາຍກວ່າເກົ່າ.

3. ຄວນສຶກສາປະເມີນຜົນການປະຕິບັດງານວິຊາການໃນໂຮງຮຽນແຫ່ງອື່ນ ເປັນຕົ້ນແມ່ນໂຮງຮຽນເອກະຊົນ ໂດຍການປຽບທຽບປະສິດທິພາບຜົນການນຳໃຊ້ຮູບແບບ CIPP Model

4. ຜູ້ທີ່ສົນໃຈການຄົ້ນຄວ້າໃນລັກສະນະນີ້ໃນຄັ້ງຕໍ່ໄປຄວນເກັບກຳ ແລະ ຮອບຮວມຂໍ້ມູນທາງດ້ານຄຸນນະພາບເພີ່ມຕື່ມໂດຍການຂະຫຍາຍກຸ່ມຕົວຢ່າງຜູ້ໃຫ້ຂໍ້ມູນເປັນຜູ້ບໍລິຫານ, ຜູ້

ຊ່ຽວຊານ, ນັກຮຽນ ແລະ ພໍ່ແມ່ຜູ້ປົກຄອງ ແລະ ການເກັບກຳຂໍ້ມູນຈາກການສຳພາດ, ການສັງເກດ ແລະ ອື່ນໆ ເປັນຕົ້ນ.

5) ຄວນສຶກສາການວິເຄາະແນວໂນ້ມທາງການພັດທະນາ ແລະ ໝູນໃຊ້ CIPP Model ໃນສະພາບແວດລ້ອມຂອງ ສປປ. ລາວ ໃນແຕ່ລະພາກ.

## ໙. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025.* ນະຄອນຫຼວງວຽງຈັນ.

________. (2016). *ແບບຮຽນວິຊາສຶກສາພົນລະເມືອງຊັ້ນ ມ 7.* ນະຄອນຫຼວງວຽງຈັນ.

________. (2018ກ). *ຜູ້ບໍລິຫານການສຶກສາ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

________. (2018ຂ). *ຍຸດທະສາດການພັດທະນາຊັບພະຍາກອນມະນຸດຮອດປີ 2025.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ຄະນະຈັດຕັ້ງສູນກາງພັກ. (2016). ໃນການພັດທະນາປະເທດຊາດຕ້ອງຖືເອົາວຽກງານການສຶກສາໄປກ່ອນວຽກງານອື່ນກ້າວໜຶ່ງ. ຄະນະຈັດຕັ້ງສູນກາງພັກປະຊາຊົນປະຕິວັດລາວ. *ວາລະສານອາລຸນໃໝ່, 3*(2), 12-17.

ສະພາແຫ່ງຊາດ. (2015). *ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ແຍະລີ່ ຈຸ່ມໍ່. (2012). *ການປະເມີນຜົນຫຼັກສູດປະລິນຍາຕີສຶກສາສາດ (ຫຼັກສູດປັບປຸງປີ 2006) ພາກວິຊາຄູຄະນິດສາດ ມະຫາວິທະຍາໄລສຸພານຸວົງ.* [ວິທະຍານິພົນປະລິນຍາໂທຄູສາດມະຫາບັນດິດ] ສາຂາຫຼັກສູດ ແລະ ການສອນ, ມະຫາວິທະຍາໄລຣາຊະພັດນະຄອນປະຖົມ.

ບຸນຊົມ ສີສະອາດ. (2015). *ການວິໄຈຂັ້ນພື້ນຖານ (ພິມຄັ້ງທີ່ 8).* ກຸງເທບມະຫານະຄອນ: ສຸວິຣິຍາສາສົນ.

ປະກາຍລັດ ສຸວັນ ແລະ ອະມອນວິດ ວິເສດສະຫງວນ. (2012). *ການວິໄຈ ແລະ ການວິເຄາະຂໍ້ມູນດ້ວຍໂປແຮມ SPSS Version 20.0.* Bang Kok: Se-Education Public Company Limited.

ພັກປະຊາຊົນປະຕິວັດລາວ. (2021). *ກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນປະຕິວັດລາວ.* ນະຄອນຫຼວງວຽງຈັນ.

ມາລຽມ ນິນລະພັນ. (2010). *ວິທີວິໄຈທາງການສຶກສາ (Research Methodology in education).* ຄະນະສຶກສາສາດມະຫາວິທະຍາໄລສິນລະປະກອນ. ນະຄອນປະຖົມ: ສູນວິໄຈ ແລະ ພັດທະນາທາງການສຶກສາ.

ຫ້ອງການສຶກສາທິການ ແລະ ກິລາເມືອງແບງ. (2023). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 2024.* ກອງປະຊຸມຜູ້ບໍລິຫານການສຶກສາ. ເມືອງແບງ ແຂວງອຸດົມໄຊ.

Noinuay, P., Rattanapanya, S.,& Diskum, S. (2023). An Evaluation of the School Based Curriculum of Suankularb Wittayalai Thonburi Using the CIPP Model. *Academic MCU Buriram Journal, 8*(2), 1-13.

Paksripang, P. (2018). An Evaluation Curriculum: Science and Mathematics Program of Piboonbumpen Demonstration School, Burapha University. *Rampaiphanni Research Journal, 13*(1), 97-106.

Stuffebeam, D. L. (2003). *The CIPP model for evaluation. The paper presented the 2003 Annual Conference of the Oregon Program Evaluation Network (OPEN).* Portland: Oregon.

Vathanavong T, Tungkasamith A and Thinwiangthong S. (2024). Enhancing professional development with Lesson study training for Lecturers at Higher education institution in Lao PDR. *FWU Journal of Social Science, 18*(1), 104-119. http://doi.org/10.51709/19951272/Spring2024/8

Wongthong, J., Sroypett, J., & Sriguntha, W. (2023). Evaluation of School as Learning Community Project Using CIPP Model at Koh Phangan Suksa School Under the Secondary Educational Service Area Office Suratthani Chumphon. *Western University Research Journal of Humanities and Social Science, 9*(3), 65-76

Yamrung, R., & Susa, P. (2017). The evaluation of optimization projects for schools is under the criteria. *Journal of Educational Studies, Srinakharinwirot University, 18*(2), 45-58.